# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 28 ມະກະຣາ 2024 (01-28-2024)

## ໝາກຜົນຄວາມເຊື່ອ

**ຈຸດສຳຄັນໃນບົດຮຽນ:** ຄວາມເຊື່ອທີ່ຮັບຮູ້ສິດອຳນາດຂອງພຣະເຢຊູ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຟແຣັງ ເດວິດ ເບັນເນັດ ສູງບໍ່ກາຍ 5'5" ແລະອາຍຸຂອງເພິ່ນໄດ້ 70 ປີແລ້ວ ເມື່ອຂ້າພະເຈົ້າເຂົ້າວິທຍາລັຍ ລຸຍຊຽນນາໂຮງລະຄອນໃຫຍ່. ເປັນປີສຸດທ້າຍຂອງການສອນຂອງເພິ່ນແລະເປັນປີທຳອິດທີ່ຂ້າພະເຈົ້າເຂົ້າວິທຍາລັຍ. ຂ້າພະເຈົ້າໄດ້ຮັບແຕ່ທຶນການສຶກສາໂຮງລະຄອນຂອງກິນເທົ່ານັ້ນ, ຂ້າພະເຈົ້າຕ້ອງໄດ້ເຮັດວຽກໃນຮ້ານຊຸດເຄື່ອງນຸ່ງ. ເພິ່ນເປັນຄົນນ້ອຍ, ແຕ່ ພຽງປາກກາຍີດດຽວ, ເພິ່ນກໍສາມາດຕັດທຶນການສຶກສາແລະວຽກຂອງຂ້າພະເຈົ້າໄດ້. ຂ້າພະເຈົ້າອາດຖືກຍົກຍ້າຍໄປເຮັດວຽກຢູ່ໂຮງອາຫານ, ຊຶ່ງເປັນວຽກທີ່ຂີ້ຮ້າຍທີ່ສຸດສຳລັບນັກຮຽນໃໝ່ອາຍຸ 18 ປີ ຢ່າງຂ້າພະເຈົ້າ. ສິດອຳນາດຂອງເພິ່ນສຳຄັນທີ່ສຸດໃນປີນັ້ນ, ເພິ່ນກໍຊາບແລະຂ້າພະເຈົ້າກໍຊາບດີ. ນັ້ນແມ່ນເຣື່ອງກ່ຽວກັບສິດອຳນາດ. ເຈົ້າໜ້າທີ່ຕຳຣວດແຂງແຮງທີ່ສຸດບໍ່ສາມາດຢຸດຣົດທີ່ກຳລັງເຄື່ອນທີ່ໄດ້, ແຕ່ຕຳຣວດຄົນດຽວກັນນັ້ນສາມາດອອກຄຳສັ່ງໃຫ້ພົລເມືອງປະຕິບັດຕາມກົດໝາຍຄືຢຸບເບຣກຢຸດລົດທີ່ກຳລັງເຄື່ອນທີ່ໄດ້.

ພຣະເຢຊູໄດ້ປາກົດສະພາບສິດອຳນາດທີ່ຜິດປົກກະຕິແກ່ຄົນຈຳນວນຫຼາຍທີ່ພຣະອົງໄດ້ພົບ, ແຕ່ເປັນເຣື່ອງແປກນາຍຮ້ອຍໄດ້ຮັບຮູ້ສິດອຳນາດຂອງພຣະອົງແລະໄດ້ຮັບບຳເນັດຢ່າງໃຫຍ່ຫຼວງ.

*ໃຜແດ່ໃນຊີວິດຂອງທ່ານທີ່ສາມາດເຮັດໃຫ້ທ່ານສິ້ນໃຈສເມີ?*

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, ແລະ 3,)

## ການສຶກສາພຣະຄັມພີ

**1. ລູກາ 7:1-5.**

*1.ເມື່ອພຣະເຢຊູຊົງກ່າວຄຳເຫຼົ່ານັ້ນໃຫ້ພົລເມືອງຟັງໝົດແລ້ວ ພຣະອົງກໍສະເດັດເຂົ້າໄປໃນເມືອງກາເປນາອູມ. 2. ມີຂ້ອຍໃຊ້ຂອງນາຍທະຫານຄົນນຶ່ງທີ່ນາຍຮັກຫຼາຍ ປ່ວຍຢູ່ໃກ້ຈະຕາຍແລ້ວ. 3. ເມື່ອນາຍຮ້ອຍຜູ້ນັ້ນໄດ້ຍິນເຖິງພຣະເຢຊູ ຈຶ່ງໄດ້ໃຊ້ເຖົ້າແກ່ບາງຄົນຂອງພວກຢິວ ໃຫ້ໄປອ້ອນວອນເຊີນພຣະອົງສະເດັດມາໂຜດຂ້ອຍໃຊ້ຂອງຕົນໃຫ້ດີ. 4. ເມື່ອຄົນເຫຼົ່ານັ້ນມາເຖິງພຣະເຢຊູແລ້ວ ເຂົາກໍອ້ອນວອນພຣະອົງດ້ວຍໃຈຮ້ອນຮົນວ່າ, "ນາຍຮ້ອຍຜູ້ນັ້ນສົມຄວນທີ່ພຣະອົງຈະເຮັດການນີ້ໃຫ້ທ່ານ. 5. ເພາະວ່າທ່ານຮັກປະເທດຊາດຂອງເຮົາ ແລະແມ່ນຜູ້ນີ້ແຫຼະ, ໄດ້ສ້າງໂຮງທັມມະເທສນາໃຫ້ພວກເຮົາ."*

ບາງຄັ້ງ ບົດຮຽນດີສຸດມາຈາກຄົນບໍ່ຄື. ນີ້ເປັນຄວາມຈິງແທ້ ໃນລູກາເຣື່ອງການປົວພະຍາດຄົນໃຊ້ຂອງນາຍຮ້ອຍ. ຄຳຊີ້ແຈງທຸກຄຳຊີ້ໄປຫາຄວາມຈິງທີ່ວ່າ ນາຍຮ້ອຍຜູ້ນີ້ເປັນຄົນຕ່າງຊາດ, ແລະອຳນາດການປົກຄອງຂອງຄົນໂຣມັນ, ນາຍຮ້ອຍເປັນເຈົ້າໜ້າທີ່ຊາວໂຣມັນທີ່ມີສິດເໜືອທະຫານ 100 ຄົນ. ເວົ້າອີກຢ່າງນຶ່ງແມ່ນ, ລາວມີສິດແລະອຳນາດຄວບຄຸມຢ່າງໃຫຍ່ຫຼວງ.

ທຸກຄົນໃນທີ່ສຸດກໍສລຸບໄດ້ວ່າມີຫຼາຍສິ່ງຫຼາຍຢ່າງໃນຊີວິດເກີດຂຶ້ນໂດຍທີ່ເຮົາບໍ່ໄດ້ອະນຸຍາດ. ພວກເຮົາຕ້ອງໄດ້ເລີກຈາກຄວາມແຂງກະດ້າງດ້ວຍຕົວເຮົາເອງ ດ້ວຍວ່າພວກເຮົາບໍ່ໄດ້ຢູ່ໃຕ້ການຄວບຄຸມຂອງທຸກສິ່ງ. ດັ່ງທີ່ຫຼາຍຄົນເວົ້າວ່າ, "ພວກເຮົາຕ້ອງຄວບຄຸມເໝືອນດັ່ງຜູ້ຈັດການຈັກກະວານ." ຊີວິດສັບສົນຫຼາຍແລະທຸກຄົນກໍຕໍ່ສູ້ກັບສິ່ງໃດສິ່ງນຶ່ງ. ເຖິງແມ່ນຄົນທີ່ແຂງແຮງທີ່ສຸດໃນໝູ່ເຮົາ-ຜູ້ທີ່ມີສິດຫຼາຍທີ່ສຸດ-ພົບວ່າເຂົາເອງກໍຕົກຢູ່ໃນຄວາມທຸກລຳບາກ. ເສດຖີໃຫຍ່ຍັງເປັນມະເລັງມ້າມຄືກັນກັບເຮົາທັງຫຼາຍ. ອຸບັດຕິເຫດອາດເກີດຂຶ້ນໄດ້, ແມ້ກະທັ້ງເວລາເຮົາລະມັດລະວັງທີ່ສຸດ. ບໍ່ວ່າເຮົາຈະອ່ານປຶ້ມວິທີຊ່ອຍຕົນເອງຫຼາຍພຽງໃດກໍຕາມເຮົາຍັງອາດຖືກທຳລະ

ຍົດແລະປະຕິເສດຈາກຄົນໃນຄອບຄົວເຮົາເອງ. ພວກເຮົາທຸກຄົນພົບວ່າຕົນເອງດີ້ນຣົນພາຍໃຕ້ນ້ຳໜັກຂອງຄວາມບໍ່ແນ່ນອນ. ຄຳຖາມສຳລັບເຮົາທຸກຄົນຖາມຕົນເອງວ່າ: ພວກເຮົາຈະກັບຄືນບ່ອນໃດ ເວລາຊີວິດບໍ່ໄດ້ຮັບຄວາມຍຸຕິທັມ. ພວກເຮົາຈະເຮັດຫຍັງເວລາເຮົາໄດ້ຮັບສິ່ງທີ່ບໍ່ຄາດຝັນກະທົບ ຫຼື ຊີວິດເລີ່ມກັບກາຍມືດມົນ?

ພຣະເຢຊູຊາບອະທິປະໄຕຂອງພຣະອົງເອງ, ຊົງຊາບວ່າ ໂທດທີ່ພຣະອົງຈະໄດ້ຮັບ ແທນຄວາມບາບຂອງເຮົາອາດມາຈາກລະບົບດຽວກັນກັບນາຍຮ້ອຍບັງຄັບໃຊ້. ຖ້າພວກເຮົາຮູ້ສິ່ງເຫຼົ່ານີ້ດີພໍ, ຖ້າວ່າເຮົາມີຄວາມຮູ້ຫຼາຍພຽງນີ້, ຖ້າເຮົາຮູ້ລ່ວງໜ້າກ່ຽວກັບສິ່ງທີ່ຈະເກີດຂຶ້ນກັບເຮົາໃນອານາຄົດ, ທ່າທີຂອງເຮົາຈະເປັນແນວໃດ? ມັນເປັນການຍາກແທ້ບໍ່ທີ່ຈະຍື່ນມືຊ່ວຍເຫຼືອ ຜູ້ທີ່ຈະນຳຄວາມຕາຍມາສູ່ເຮົາ? ເຖິງຢ່າງໃດກໍຕາມ, ເຖິງແມ່ນພຣະເຢຊູຊາບດີ, ພຣະອົງກໍຍັງໄດ້ກະທຳພາຍໃຕ້ຫຼັກທັມແຫ່ງພຣະຄຸນ. ມັນງ່າຍທີ່ພວກເຮົາຈະລືມສິດອຳນາດແຫ່ງພຣະຄຸນ ແລະແນວຄວາມຄິດປຸ່ງນລະບົບນີ້ທີ່ໄດ້ເປັນຂອງຊາວຢິວ. ເຂົາຕ້ອງຢູ່ແລະຕ້ອງຕາຍດ້ວຍກົດບັນຍັດ. ມີບາດກ້າວຫຼາຍກ້າວທີ່ຕ້ອງເດີນເພື່ອຈະໄດ້ຮັບຄຳຊົມທີ່ມີອຳນາດສູງສຸດ, ແລະ ຖ້າທ່ານພາດກ້າວດຽວ, ມັນກໍໄດ້ເປັນກົດລະບຽບຜູກຂາດເຊັ່ນ: "ຫ້າມຜ່ານໄປ. ຫ້າມເກັບເງິນ $200.00!"

ພຣະເຢຊູມີຫົວໃຈເມດຕາສົງສານ, ຊົງເປັນຫ່ວງສາມສິ່ງ: **ຄົນ, ຄົນ,** ແລະ **ຄົນ**. ການປະເຊີນສ່ວນຫຼາຍບໍ່ເກີດຂຶ້ນໂດຍການນັດພົບ. ຄືກັນກັບເລື່ອງນີ້, ສິ່ງຕ່າງໆເກີດຂຶ້ນລະຫວ່າງທາງຈາກບ່ອນນີ້ເຖິງບ່ອນນັ້ນ. <u>ຄວາມເຊື່ອໃນພຣະເຢຊູບໍ່ສາມາດຜ່ານດ້ວຍຄຸນຄວາມດີ, ຄວາມພຍາຍາມ, ຫຼືຄວາມສຳເຣັດຂອງເຮົາ</u>. ອັນນັ້ນບໍ່ແມ່ນຄວາມເຊື່ອ. ບໍ່ວ່າຕຳແໜ່ງ ຫຼືອາດີດພວກເຮົາຈະເປັນຈັ່ງໃດ, ພວກເຮົາສາມາດເຂົ້າຫາພຣະເຢຊູໄດ້; ພຣະອົງມີພະລັງພໍທີ່ຈະອູ້ມເຮົາໄປ. ຊາວຢິວດູຖູກຊາວໂຣມັນ ແລະຜູ້ນຳຂອງພວກເຂົາ, ແຕ່ນາຍຮ້ອຍຜູ້ນີ້ລຸກຢືນຂຶ້ນທ່າມກາງຄົນອື່ນໆ. ປາກົດວ່າຊາວຢິວໃນບ້ານນັ້ນເຫັນເພິ່ນເປັນຜູ້ມີອຳນາດທີ່ມີໃຈເພື່ອແຜ່. ເພິ່ນໄດ້ຊ່ວຍສ້າງໂຮງທັມະເທສນາ. ພວກເຂົາຢາກແນ່ໃຈວ່າ ພຣະເຢຊູຮູ້ຄວາມດີຂອງນາຍຮ້ອຍຜູ້ນີ້. ພຣະເຢຊູບໍ່ເຄີຍຖາມວ່າ, "ເປັນຫຍັງຈຶ່ງຟັງນາຍຮ້ອຍ?" ເຂົາໄດ້ຕອບຄຳຖາມນັ້ນກ່ອນຖືກຖາມເພາະເຂົານຶກໄດ້ວ່າມັນກຳລັງມາ. ແນ່ນອນມີແຕ່ຜູ້ສົມຄວນໄດ້ຍິນເທົ່ານັ້ນຈຶ່ງຈະໄດ້ຍິນ. ແມ່ນບໍ່? ເຂົາເລົ່າໃຫ້ພຣະເຢຊູຟັງວ່າເພິ່ນ<u>ສົມຄວນໄດ້ຮັບ.</u> ເຂົາຄິດວ່າ<u>ຄວາມດີ</u>ເປັນມາຕຖານຊັກນຳເຂົາໃຫ້ເປັນທີ່ໂປດປານ. ມາດຕະຖານຂອງຊາວຢິວແມ່ນ: ເປັນຄົນດີ. ມາດຕະຖານຂອງພຣະເຢຊູແມ່ນ: ເປັນຂອງພຣະເຈົ້າ. ທ່ານໂປໂລຊັດເຈນໃນເລື່ອງນີ້: "ດ້ວຍວ່າຊຶ່ງທ່ານທັງຫຼາຍໄດ້ຖືກຊົງໂຜດໃຫ້ພົ້ນກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ ສິ່ງເຫຼົ່ານີ້ ບໍ່ໃຊ່ພວກທ່ານເຮັດເອົາເອງ ແຕ່ພຣະເຈົ້າຊົງປະທານໃຫ້. ຄວາມພົ້ນນັ້ນບໍ່ໃຊ່ມີມາຍ້ອນການປະຕິບັດເພື່ອບໍ່ໃຫ້ຄົນນຶ່ງຄົນໃດອວດໄດ້ (ເອເຟໂຊ 2:8-9). ພຣະເຈົ້າເປີດຮັບຟັງສຽງທີ່ສິ້ນຫວັງ ແລະພຣະອົງຍິນດີໃນເວລາເຫັນຄົນໃດຄົນນຶ່ງໄດ້ຮັບການໄຖ່. ພຣະອົງດີປານນັ້ນ.

*ບ່ອນໃດທີ່ປະເພນີຂອງເຮົາຊູໃຈເຮົາໃຫ້ກັບຄືນເວລາບັນຫາຫຍຸ້ງຍາກເກີດຂຶ້ນ?*

## 2. <u>ລູກາ 7:6-8</u>.

*6. ແລະພຣະເຢຊູຈຶ່ງສະເດັດໄປກັບເຂົາ ເມື່ອສະເດັດເກືອບຈະເຖິງເຮືອນແລ້ວ ນາຍຮ້ອຍທະຫານໄດ້ໃຊ້ໝູ່ສະຫາຍໄປຫາພຣະອົງທູນວ່າ, "ນາຍເອີຍ, ຢ່າຊູ່ລຳບາກທ້ອນ ເພາະວ່າຂ້ານ້ອຍເປັນຄົນບໍ່ສົມຄວນທີ່ຈະໃຫ້ທ່ານເຂົ້າໄປລຸ່ມຫຼັງຄາເຮືອນຂອງຂ້ານ້ອຍ. 7. ເພາະເຫດນັ້ນຂ້ານ້ອຍຈຶ່ງຖືວ່າເປັນຜູ້ບໍ່ສົມຄວນທີ່ຈະໄປຫາທ່ານ ແຕ່ຂໍທ່ານຈົ່ງກ່າວພຽງຄຳດຽວ ແລະຄົນໃຊ້ຂອງຂ້ານ້ອຍຄົງຈະດີພຍາດ. 8. ເຫດວ່າຂ້ານ້ອຍເປັນຄົນທີ່ຢູ່ໃຕ້ວິນັຍທະຫານ ແລະຍັງມີທະຫານຢູ່ໃຕ້ບັງຄັບບັນຊາຂອງຂ້ານ້ອຍອີກ ຄືຂ້ານ້ອຍສັ່ງຄົນນີ້ວ່າ "ໄປ" ລາວກໍໄປ ສັ່ງອີກຄົນນຶ່ງວ່າ "ມາ" ລາວກໍມາ ແລະບອກແກ່ຂ້ອຍໃຊ້ຂອງຂ້ານ້ອຍວ່າ "ຈົ່ງເຮັດສິ່ງນີ້" ລາວກໍເຮັດ."*

ເພື່ອນຂອງຂ້າພະເຈົ້າຄົນນຶ່ງໄປຊົມກິລາຟຸດບອລ ດາລັສ ຄາວບອຍ ໃນແລງວັນຈັນນຶ່ງ. ແຈັຟໄດ້ຊື້ປີ້ທີ່ຖືກທີ່ສຸດທີ່ລາວສາມາດຊື້ໄດ້ແລະຊົມກິລາຢ່າງມ່ວນຊື່ນຢູ່ຕັ່ງຫຼັງສຸດ. ລະຍະແຕ່ລາວໄປຫາບ່ອນນັ່ງກົດຕິມະສັກທີ່ສະມາຊິກໂບດຂອງລາວທີ່ຮັ່ງມີຄົນນຶ່ງໄດ້ຫຼຽວເຫັນລາວ. ຄົນນີ້ໄດ້ຖາມແຈັຟວ່າລາວນັ່ງຢູ່ໃສ. ແຈັຟ ກໍ້ມືໃສ່ຕາເຮັດກ້ອງສ່ອງທາງໄກ ແບບຕລົກແລ້ວຍິ້ມ. ໝູ່ຮັ່ງມີຂອງລາວໄດ້ກະພິບຕາໃສ່ລາວແລະເວົ້າວ່າ, "ຈົ່ງຕາມເຮົາມາ." ລາວຈູງເອົາແຈັຟຜ່ານຄົນຍາມພຽງແຕ່ເວົ້າວ່າ, "ຄົນນີ້ຢູ່ກັບເຮົາ". ເຂົາໄດ້ຂຶ້ນຂັ້ນໄດເລື່ອນໄປຫາຫ້ອງເຕັມໄປດ້ວຍ ບັບເຟ ຊີ້ນສະເຕັກ. ແຈັຟເຂົ້າຊົມກິລາໃນຖານະແຟນກິລາທັມມະດາ, ແຕ່ສຸດທ້າຍ ລາວໄດ້ນັ່ງເກົ້າອີ້

ໜັງນວມຂອງດາລັສ ຢ່າງສະບາຍພ້ອມທັງກິນອາຫານແຊບຊ້ອຍໄປນຳຢ່າງຈຸໃຈ.

ຂນະທີ່ເພິ່ນເລົ່າເຣື່ອງນີ້ໃຫ້ຂ້າພະເຈົ້າຟັງ, ຂ້າພະເຈົ້ານຶກເຖິງການເຂົ້າເຖິງພຣະເຈົ້າໂດຍທາງພຣະເຢຊູ. ພຣະອົງມີສິດໝົດທຸກຢ່າງ. ສິ່ງທີ່ເພິ່ນຕ້ອງເວົ້າແມ່ນ, "ຄືນນີ້ຢູ່ກັບເຮົາ." ຂ້າພະເຈົ້າສະຫຼຸງໃຈວ່າຈັກເທື່ອແລ້ວທີ່ຂ້າພະເຈົ້ານັ່ງຢູ່ບ່ອນປີ້ຖືກນີ້ມາ ໂດຍບໍ່ສົນໃຈນຳການເຊື້ອເຊີນຂອງພຣະເຈົ້າສູ່ຊີວິດຊື່ນຊົມຍິນດີຝ່າຍວິນຍານ.

ຄິດເບິ່ງດູ: ພວກເຮົາເຂົ້າເຖິງຄວາມໂປດປານອັນສູງສົ່ງຂອງພຣະເຈົ້າ. ພວກເຮົາບໍ່ສົມຄວນກັບມັນ: ພວກເຮົາບໍ່ໄດ້ຮັບມັນ. ພຣະອົງເລືອກທີ່ຈະປະທານໃຫ້ເຮົາ. ພຣະອົງສອນເຮົາເຖິງຄວາມໝາຍຂອງພຣະຄຸນ. ພຣະອົງໄດ້ດຶງຊັ້ນວັນນະຂອງໂລກລົງແລະຕັ້ງມາຕຖານໃໝ່ສຳລັບການເປັນເຈົ້າຂອງແລະຄວາມຫວັງ. ນີ້ຄືຄວາມໝາຍຂອງການຮັບເຊື່ອ. ນີ້ແມ່ນທ່າທີການປ່ຽນແປງຂອງການຮັບຮູ້ຜູ້ທີ່ມີສິດແລະອຳນາດທັງໝົດ. ພວກເຮົາຍອມຮັບໃຫ້ພຣະຄຣິດ ເພາະເຮົາຮູ້ວ່າ ພຣະອົງສາມາດເຮັດສິ່ງທີ່ເຮົາບໍ່ສາມາດເຮັດໄດ້ຈັກເທື່ອ. <u>ເມື່ອເຮົາມາຫາພຣະອົງ, ຊີວິດຈະກາຍເປັນກ້າວໜ້າແລະບໍ່ມີຂອບເຂດຈຳກັດ.</u> ພວກເຮົາຕ້ອງລົດຜ່ອນກຽດສັກສີ ແລະຄວາມພໍຕົວຂອງເຮົາລົງ. <u>ພວກເຮົາຕ້ອງມາຫາພຣະອົງດ້ວຍແບມືຮັບພຣະຄຸນເພື່ອຈະພົບກັບຣິດອຳນາດຂອງພຣະອົງ</u>. <u>ພວກເຮົາມີສາຍພົວພັນ</u> ເຂົ້າເຖິງພຣະເຈົ້າພຣະບິດາ ທຸກສິ່ງໂດຍທາງພຣະເຢຊູ, ພຣະບຸດຂອງພຣະອົງ. <u>ມັນ</u>ນຳເຮົາເຂົ້າໄປສູ່ຫ້ອງພຣະບັນລັງ. ດັ່ງທີ່ຜູ້ຂຽນພຣະທັມເຮັບເຣີວ່າ,*"ເຫດສັນນັ້ນໃຫ້ເຮົາທັງຫລາຍມີໃຈກ້າເຂົ້າໄປເຖິງພຣະທີ່ນັ່ງແຫ່ງພຣະຄຸນ" (ເຮັບເຣີ 4:16).* <u>ພວກເຮົາບໍ່ພຽງແຕ່ສາມາດເຂົ້າໄປໃກ້ດ້ວຍໃຈກ້າ, ແຕ່ພຣະອົງປະສົງໃຫ້ເຮົາເຂົ້າໄປໃກ້ດ້ວຍໃຈກ້າ</u>.

ເປັນທີ່ໜ້າສົນໃຈທີ່ໄດ້ຍິນຄວາມເຊື່ອຂອງນາຍຮ້ອຍ. ແນວໃດກໍຕາມ, ເພິ່ນຮູ້ວ່າພຣະເຢຊູບໍ່ຈຳເປັນຕ້ອງຢູ່ທີ່ນັ້ນເພື່ອໃຫ້ມີພລັງແລະພຽງພໍ. ພຣະເຢຊູພຽງແຕ່ກ່າວຄຳເວົ້າ. ແນວໃດກໍຕາມ, ນາຍຮ້ອຍຮູ້ຜູ້ທີ່ບອກດວງດາວປາກົດຂຶ້ນມາ ສາມາດເວົ້າປິ່ນປົວຄົນທີ່ຢູ່ໄກສອງສາມຮ້ອຍຫຼາພຸ້ນ. ເພິ່ນປ່ຽນສະຖານະການໂດຍການເຊື່ອໃນສິດແລະອຳນາດຂອງພຣະເຢຊູຢູ່ເໜືອກົດແຫ່ງເວລາແລະລະຍະທາງ. ນາຍຮ້ອຍໄດ້ຮັບເອົາຣິດອຳນາດຂອງພຣະເຢຊູຖານະຂອງປະທານອັນນຶ່ງ. ມັນອາດເປັນຄືກັນກັບທ່ານເວົ້າກັບໄວລຸ້ນຂອງທ່ານວ່າໃນອານາຄົດ,ໂທຣສັບຂອງເຈົ້າຈະຢູ່ໃນຖົງຂອງເຈົ້າ, ແລະເຈົ້າຈະເຫັນຄົນທີ່ເວົ້າກັບເຈົ້າໃນຂນະທີ່ບຸກຄົນນັ້ນຢູ່ໄກ 500 ໄມລ໌ພຸ້ນ! ນັ້ນຄືຄຳສົນທະນາທີ່ໜ້າຈັບ-ໃຈລະຫວ່າງພຣະເຢຊູກັບນາຍຮ້ອຍຕໍ່ຜູ້ທີ່ໄດ້ຍິນດ້ວຍຫູ.*"ແຕ່ຂໍທ່ານຈົ່ງກ່າວພຽງຄຳດຽວ ແລະຄົນໃຊ້ຂອງຂ້ານ້ອຍຄົງຈະດີພຍາດ."* ນີ້ແມ່ນຄຳນຳເພີ່ມເຕີມ, ຂ້າພະເຈົ້າປະຫຼາດໃຈຄຳອະທິຖານຂອງເຮົາຕ້ອງປ່ຽນໄປຖ້າພວກເຮົາມີຄວາມເຊື່ອພໍສຳລັບເຊື່ອຢ່າງເລິກເຊິ່ງວ່າສິ່ງທັງໝົດທີ່ພຣະເຢຊູຕ້ອງເຮັດກໍພຽງແຕ່ເວົ້າອອກມາ. ມັນຈະເປັນຜົນຕໍ່ເວລາທີ່ເຮົາໃຊ້ໃນຄວາມເລິກ, ສະເພາະເຈາະຈົງ, ການອະທິຖານທີ່ຈິດຈໍ່ແນວໃດ? ຄວາມເຊື່ອອັນຕໍ່ເນື່ອງນີ້ຈະປ່ຽນການດຳເນີນຊີວິດຈາກວິກິດສູ່ວິກິດແນວໃດ?

*ທ່ານພໍໃຈຫຍັງກ່ຽວກັບທ່າທີນາຍຮ້ອຍທີ່ມີຕໍ່ພຣະເຢຊູ?*

## 3. <u>ລູກາ 7:9-10</u>.

*9. ເມື່ອພຣະເຢຊູຊົງໄດ້ຍິນຄຳເຫຼົ່ານັ້ນແລ້ວກໍປລາດພຣະທັຍດ້ວຍນາຍນັ້ນ ຈຶ່ງຊົງຫຼຽວຫຼັງກ່າວກັບປະຊາຊົນທີ່ຕາມມາວ່າ, "ເຮົາບອກທ່ານທັງຫຼາຍວ່າ ແມ່ນໃນພວກອິສຣາເອນເຮົາກໍບໍ່ໄດ້ພົບຄວາມເຊື່ອໃຫຍ່ເທົ່ານີ້." 10. ຝ່າຍພວກທີ່ຮັບໃຊ້ມານັ້ນ ເມື່ອກັບໄປເຖິງເຮືອນກໍໄດ້ພົບຂ້ອຍໃຊ້ຜູ້ນັ້ນດີພຍາດແລ້ວ.*

ໂດຍຜ່ານ ຂໍ້ພຣະຄັມພີ, ພວກເຮົາອ່ານກ່ຽວກັບຄວາມປລາດໃຈຂອງປະຊາຊົນເມື່ອພຣະເຢຊູຈະເຮັດ "ການງານຂອງພຣະເຢຊູ." ພວກສາວົກໄດ້ປລາດໃຈເມື່ອຕົ້ນໝາກເດື່ອຫ່ຽວແລະຕາຍໄປ. ພວກເຂົາປະຫຼາດໃຈເມື່ອຄົນຕາຍຟື້ນຄືນມາ, ເມື່ອພາຍຸຍອມຟັງຄຳເວົ້າຂອງພຣະອົງ, ເມື່ອຄົນຂີ້ທູດໄດ້ຫາຍດີ, ແລະເມື່ອພຣະເຢຊູໃຫ້ອະພັຍຄົນທີ່ຄວາມບາບທຳລາຍຢ່າງໜັກໜ່ວງແລະຮ້າຍແຮງ. ແຕ່ໃນເຣື່ອງນີ້ກັບເປັນລາຍຕ່າງ. ນາຍຮ້ອຍໂຣມັນປລາດໃຈພຣະເຢຊູກ່ຽວກັບຄວາມເຊື່ອຂອງລາວ. ມັນແປກໃຈຕໍ່ຂ້າພະເຈົ້າທີ່ວ່າກະສັດຂອງສັພສິ່ງທັງປວງປລາດພຣະທັຍກັບຄວາມເຊື່ອຂອງຜູ້ໃດຜູ້ນຶ່ງ. ບາງທີອາດກ່າວຄວາມຈິງວ່າພຣະເຢຊູປິ້ມໃຈກັບຄວາມເຊື່ອຂອງພວກເຮົາເມື່ອພວກເຮົາສະແດງມັນອອກມາ.

*ທ່ານຄິດວ່າອັນໃດເປັນສິ່ງທີ່ປລາດໃຈກ່ຽວກັບຄວາມເຊື່ອຂອງນາຍຮ້ອຍ?*

ຂ້າພະເຈົ້າຄິດວ່າພຣະເຈົ້າກໍສລອງສິ່ງເລັກນ້ອຍເໝືອນກັນ. ບັດນີ້ໄປນໍາຂ້າພະເຈົ້າໃນເຣື່ອງນີ້: ຂ້າພະເຈົ້າຄຶດໃນທິດທາງດຽວກັນ, ພວກເຮົາມີຄວາມສາມາດ ແລະພຣະເຈົ້າມີຄວາມປາຖນາປລາດໃຈໃນຄວາມເຊື່ອຂອງເຮົາ. ໃນເມື່ອຊັບພຍາກອນຂອງເຮົາມີໜ້ອຍ ແລະເຮົາສືບຕໍ່ບໍຣິຈາກດ້ວຍໃຈເພື່ອແຜ່, ເຮົາກໍຢູ່ໃນຄວາມປລາດໃຈຂອງພຣະເຈົ້າ. ເມື່ອເຮົາຖ່ອມຕົວໃຫ້ພຣະອົງ ແລະວາງໃຈພຣະອົງດ້ວຍຄວາມເຊື່ອເໜືອທັມມະຊາດ, ພວກເຮົາຕ້ອງຮູ້ສຶກປລາດໃຈຢ່າງສູງສົ່ງ, ດັ່ງດຽວກັນກັບນາຍຮ້ອຍປລາດໃຈພຣະເຢຊູ. ຖ້າທ່ານຢາກໃຫ້ເປັນທີ່ພໍພຣະທັຍພຣະເຢຊູ: ຈົ່ງມີຄວາມເຊື່ອຈັກໜ້ອຍ. ເຮັບເຣີ 11:6 ເຕືອນເຮົາວ່າ ຖ້າປາສຈາກຄວາມເຊື່ອແລ້ວຈະເປັນທີ່ພໍພຣະທັຍພຣະເຈົ້າບໍ່ໄດ້. ຖ້າພວກເຮົາຢາກໃຫ້ເປັນທີ່ພໍພຣະທັຍ, ພໍພຣະທັຍ, ພຣະບິດາແຫ່ງແດນສວັນແທ້ໆ, ພວກເຮົາຕ້ອງຍອມຮັບເຊື່ອ. ການຍອມຮັບເຊື່ອບໍ່ໄດ້ປະຖິ້ມເມື່ອພາຍຸລວມຕົວໃນທ້ອງຟ້າດ້ານຕາເວັນຕົກ. ບໍ່ລໍຖ້າສະຖານະການທີ່ສົມບູນແບບ. ການຍອມຮັບເຊື່ອຂອງເຮົາແມ່ນຄວາມເຊື່ອທີ່ພ້ອມຈະສູ້ທົນຕໍ່ການທົດລອງຂອງລະດູການວຸ້ນວາຍ. ໃນໂລກແຫ່ງຄວາມບໍ່ແນ່ນອນນີ້, ຂນະທີ່ປະເທດຕ່າງໆໂກດແຄ້ນແລະຄົນໂງ່ປົກຄອງໃນຍຸກນີ້, ພວກເຮົາສາມາດແນ່ໃຈວ່າພຣະເຈົ້າກໍາລັງຊອກຫາຄົນທີ່ເຊື່ອ ຜູ້ທີ່ຢາກເອົາຊນະບັນຍາກາດ ແລະເຂົ້າໃນການບໍຣິໂພກທັງໝົດ, ການຕາມຫາຢ່າງບໍ່ຢຸດຢັ້ງຂອງພຣະເຢຊູ. ຂ່າວດີກ່ຽວກັບການຍອມຮັບເຊື່ອແມ່ນເຮົາເຂົ້າໃກ້ພຣະເຈົ້າໃນຄວາມເຊື່ອ. ພຣະອົງສັນຍາຈະປະທານລາງວັນຍິ່ງໃຫຍ່. ລາງວັນນີ້ຈະທົດແທນການຄໍ້າປະກັນທີ່ບໍ່ມີປໂຍດທີ່ໂລກຍໍຍື່ນໃຫ້. <u>ຊີວິດເຮົາໃນໂລກນີ້, ນອກພຣະຄຣິດ, ບໍ່ມີການຮັບປະກັນຄວາມສໍາເຣັດ</u>. ແຕ່ກັບພຣະຄຣິດ, ເຖິງແມ່ນວ່າປາກົດຄືວ່າຫຼົ້ມເຫຼວແຕ່ກໍຍັງໄດ້ຮັບໄຊຊນະ. ນັ້ນແມ່ນເຣື່ອງແທ້ຈິງຂອງຂ່າວປະເສີດ. ພຣະເຢຊູບໍ່ໄດ້ສະເດັດມາໃນໂລກຖານະວິລະຊົນຜູ້ພິຊິດຂັບໄລ່ ສັດຕູຂອງພຣະອົງດ້ວຍແສງໄຟ. ພຣະເຢຊູຜູ້ບຸກເບີກຄວາມເຊື່ອ, ກໍຍັງຍອມຮັບການຕາຍຢ່າງຈະແຈ້ງຂອງພຣະອົງເອງ. ແຕ່ນັ້ນກໍຍັງບໍ່ແມ່ນຕອນຈົບຂອງເຣື່ອງ, ແມ່ນບໍ່? ພຣະເຢຊູເຊື້ອເຊີນເຮົາເຂົ້າໃນຄວາມເຊື່ອດຽວກັນກັບທີ່ໄດ້ຊູພຣະອົງໃຫ້ເປັນຂຶ້ນມາຈາກຕາຍ, ເພື່ອເຮົາສາມາດເປັນຍິ່ງກວ່າຜູ້ພິຊິດ-ທັງໃນໂລກນີ້ແລະນິຣັນດອນຕລອດໄປ.

*ຄົນສາມາດບອກວ່າພຣະເຢຊູມີສິດອໍານາດເໜືອຊີວິດທ່ານຢ່າງໃດ?*

## ນໍາໃຊ້ໃນຊີວິດ

ຄວາມເຊື່ອຮັບຮູ້ສິດອໍານາດຂອງພຣະເຢຊູ. ຈົ່ງເລືອກເອົາຂໍ້ນຶ່ງຂອງການນໍາໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງຂອບພຣະຄຸນ.** ຈົ່ງໃຊ້ເວລາເຝົ້າດ່ຽວສະທ້ອນວ່າພຣະເຈົ້າໄດ້ຈັດຫາໃຫ້ທ່ານຜ່ານມາ. ຈົ່ງຂອບພຣະຄຸນ.
- **ຈົ່ງອະທິຖານ.** ຈົ່ງເຮັດບັນຊີເຫດການຕ່າງໆທີ່ທ້າທາຍຄວາມເຊື່ອຂອງທ່ານ. ທູນຂໍພຣະເຈົ້າປະທານຄວາມເຊື່ອໃຫຍ່ກວ່າໃຫ້ທ່ານໃນການສະຖິດນໍາ ແລະຣິດອໍານາດຂອງພຣະອົງ.
- **ຈົ່ງສແວງຫາ.** ຈົ່ງຊອກຫາບາງຄົນທີ່ສູ້ຊົນໃນຊີວິດໃນຣະດູນີ້. ຈົ່ງພົວພັນກັບເຂົາ. ອວຍພອນພວກເຂົາດ້ວຍຖ້ອຍຄໍາແລະການກະທໍາຂອງທ່ານ.

ວັນນີ້ຄວາມເຊື່ອຂອງທ່ານຢູ່ໃສ? ທ່ານເກາະຕິດຢູ່ດ້ວຍເສັ້ນດ້າຍດຽວບໍ່? ທ່ານເພິ່ງພຣະເຢຊູຈົນໝົດສິ້ນບໍ່? ທ່ານຢູ່ໃນຣະຫວ່າງກາງບໍ່? ຂ່າວດີກ່ຽວກັບຄວາມເຊື່ອແມ່ນວ່າ ຍິ່ງທ່ານນໍາໃຊ້ຄວາມເຊື່ອ, ຍິ່ງດີກວ່າທີ່ທ່ານເປັນຢູ່. ພູເຂົາຖືກປັບຂນາດເທື່ອລະກ້າວ. ທ່ານຈະງຶດປລາດໃຈ ວ່າທ່ານຈະຖືກຍົກຂຶ້ນສູງຢູ່ເທິງປີກຂອງໝາກຜົນຄວາມເຊື່ອ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**